ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************************

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 430/ຫສນຍ.ກລຂ

ນະຄອນຫລວງວຽງຈັນ, ວັນທີ 21. 3. 2017

# ແຈ້ງການ

**ຮຽນ:** - ບັນດາທ່ານລັດຖະມົນຕີກະຊວງ-ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ.

- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560.

- ອີງຕາມມາດຕາ 55 ຂອງກົດໝາຍວ່າດ້ວຍແຮງງານ, ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 ກ່ຽວກັບວັນພັກທາງລັດຖະການ.
- ອີງຕາມຮີດຄອງປະເພນີ ແລະ ມູນເຊື້ອອັນດີງາມຂອງຊາດລາວມາແຕ່ດົນນານ ໃນການສະເຫຼີມສະຫຼອງວັນບຸນປີໃໝ່ກຸດສົງການ.
- ອີງຕາມການຊີ້ນຳ ແລະ ຕົກລົງໃນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ມີນາ 2017.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານລັດຖະມົນຕີ-ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ຕະຫຼອດຮອດພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດຊາບ ດັ່ງນີ້:

1. **ການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560 ເປັນປີທີ່ມີຄວາມໝາຍສຳຄັນ ຊຶ່ງເປັນປີທີ່ທົ່ວພັກ ທົ່ວປວງຊົນລາວ ສືບຕໍ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ- ສັງຄົມ ປະຈຳປີ 2017 ໃຫ້ປະກົດຜົນເປັນຈິງ.**

2. ໃຫ້ຖືເອົາການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560 ທີ່ຈະໝູນວຽນມາເຖິງນີ້ ເປັນໂອກາດໜຶ່ງທີ່ສຳຄັນ ໃນການສືບຕໍ່ເສີມຂະຫຍາຍມູນເຊື້ອ ຮີດຄອງປະເພນີອັນດີງາມ ແລະ ຄວາມສາມັກຄີເປັນປຶກແຜ່ນຂອງຊາດ ທີ່ມີມາແຕ່ດົນນານແລ້ວ, ເປັນບຸນໃຫຍ່ປະຈຳຊາດ ທີ່ທົ່ວປວງຊົນລາວທັງຊາດ ຖືເອົາໂອກາດນີ້ ອວຍໄຊໃຫ້ພອນເຊິ່ງກັນ ແລະ ກັນ, ຈັດຕັ້ງສະເຫຼີມສະຫຼອງ ດ້ວຍບັນຍາກາດ